**ການບ້ານບົດທີ 7 ພາກຕົ້ນ**

# ໂປໂລເຫັນການນິມິດ

## ເຈົ້າແຂວງຄາລີໂອນລົງຄວາມເຫັນຢ່າງຈະແຈ້ງ

**1** ໃນບົດຮຽນນີ້ ເຮົາຈະສຶກສາເລື່ອງເຫດການສອງປະການໃນເມື່ອໂປໂລຢູ່ໂກລິນໂທ.

ກ. ຮູບໃດຕໍ່ໄປນີ້ສະແດງເຖິງພະຜູ້ເປັນເຈົ້າຊົງກ່າວກັບໂປໂລທາງນິມິດ? ____________

ຂ. ຮູບໃດສະແດງເຖິງເຈົ້າແຂວງຄາລີໂອນລົງຄວາມເຫັນ? ______________________

## ໂປໂລເຫັນການນິມິດໃນເມືອງໂກລິນໂທ




1 .




2 .

<u>ໃຫ້ອ່ານ ກຈກ 18:9-11</u>

**2** ພວກຢິວທີ່ບໍ່ເຊື່ອໃນພະອົງ ບໍ່ໃຫ້ໂປໂລເຂົ້າເທດສະໜາໃນໂຮງທຳຕໍ່ໄປ. ການນັ້ນອາດຈະເຮັດໃຫ້ໂປໂລທໍ້ຖອຍໃຈຫຼາຍ.

ກ. ແມ່ນໃຜມາກ່າວກັບໂປໂລ? (ຂໍ້ 9) ________________________________

ຂ. ປາກົດມາທາງໃດ? ____________________________________________

**3** ການນິມິດນີ້ມີສ່ວນຄ້າຍຄືກັບການນິມິດທີ່ໂປໂລພົບເວລາເດີນທາງໄປດາມາເຊ ຄືພະອົງມາເຮັດໃຫ້ ເພິ່ນຫມົດຂໍ້ສົງໄສ.

ກ. ໃນ ກຈທ 18:9 ພະເຢຊູກ່າວວ່າ "ຢ່າຊູ່ ______________________ " (ຕື່ມຄວາມທີ່ຂາດ)

ຂ. ຈົ່ງເຮັດຫຍັງຕໍ່ໄປ? ________________________________________________

ຄ. ພະອົງສັນຍາວ່າ ມີພົນລະເມືອງຫຼາຍໃນນະຄອນນີ້ຄືນະຄອນໃດ? _______________

ງ. ໃຫ້ກັບໄປເບິ່ງຮູບຫນ້າ 8 ໃນ 5 ຮູບນັ້ນ ແມ່ນຮູບໃດທີ່ສະແດງເຖິງ ໂປໂລໃນເມືອງໂກລິນໂທ? ________________________________________

**4** ມາເຖິງນີ້ໂປໂລອາດຈະຫມົດຫວັງຫຼາຍແລ້ວ. ເພິ່ນເດີນທາງມາໄກ. ໄປບ່ອນໃດກໍຕາມພວກຢິວທີ່ບໍ່ ເຊື່ອຂົ່ມເຫງເພິ່ນ. ຮ່າງກາຍກໍເຈັບຍ້ອນເຂົາຊ້ຽນໃນເມືອງຟີລິບປອຍແລະທີ່ອື່ນ ໆ. ເພິ່ນອາດຈະ ຢາກເລີກບໍ່ຮັບໃຊ້ພະເຈົ້າຕໍ່ໄປ ແຕ່ພໍດີເວລາຫມົດຫວັງຫນັກນັ້ນເພິ່ນເຫັນພະເຢຊູທາງນິມິດ. ພະອົງ ຫນູນໃຈແລະລົງຄໍາສັ່ງຢ່າງຈະແຈ້ງໃຫ້ເພິ່ນ.

ກ. ໂປໂລຢູ່ໂກລິນໂທອີກດົນປານໃດ? (ກຈທ 18:11) __________________________

ຂ. ໃນເວລານັ້ນ ໂປໂລສອນຫຍັງ? ______________________________________

## ເຈົ້າແຂວງຄາລີໂອນລົງຄວາມເຫັນຢ່າງຈະແຈ້ງ

<u>ໃຫ້ອ່ານ ກຈທ 18:12-17</u>

**5** ຄົນຢິວທີ່ບໍ່ເຊື່ອໃນພະອົງຍັງຕໍ່ສູ້ໂປໂລ.

ກ. ເຂົາພາໂປໂລໄປສານແລະຜູ້ປົກຄອງແຂວງໃດ? (ກຈທ 18:12) ________________

ຂ. ເຂົາຟ້ອງວ່າ ໂປໂລຊັກຊວນຄົນໃຫ້ນະມັດສະການພະເຈົ້າ ຕາມທາງຜິດຫຍັງ? (ກຈທ 18:13) ____________________________________________________

**6** ແຕ່ເຫັນວ່າພະເຈົ້າຍັງຊົງຊ່ອຍໂປໂລຢູ່ ເພາະເຈົ້າຈັກກະພັດໂລມຫາກໍແຕ່ງຕັ້ງຜູ້ປົກຄອງແຂວງອະຂາຢາໃຫມ່. ຜູ້ປົກຄອງແຂວງນັ້ນເປັນຄົນຍຸຕິທໍາ.

ກ. ຜູ້ປົກຄອງແຂວງນັ້ນຊື່ຫຍັງ? (ກຈທ 18:14) _______________________________

ຂ. ເມື່ອໂປໂລກໍາລັງຈະອອກປາກ ຄາລີໂອນຂັດຂວາງ ເພາະເພິ່ນບໍ່ຢາກເຮັດຫຍັງ? (ປາຍຂອງ ກຈທ 18:15) ___________________________________________

ຄ. ບໍ່ຢາກຕັດສິນເລື່ອງພະບັນຍັດຂອງພວກຊາດໃດ? __________________________

ງ. ເລີຍໄລ່ພວກຢິວນັ້ນອອກຈາກໃສ? (ກຈທ 18:16) __________________________

**7** ເປັນເທື່ອທໍາອິດທີ່ເຫັນເຈົ້າຫນ້າທີ່ໂລມ ເຂົ້າຂ້າງຝ່າຍຄຼິດສະຕຽນ.

ກ. ຄາລີໂອນນັ້ນຕັດສິນໂດຍເປັນຜົນດີໃຫ້ແກ່ໃຜ? ____________________________

ຂ. ຄັດຄ້ານຝ່າຍໃດ? ________________________________________________

*ພະຄຳພີບໍ່ໄດ້ເວົ້າຫຼາຍກ່ຽວກັບຜູ້ປົກຄອງແຂວງ ຄາລີໂອນ. ນອກຈາກ ກຈກ ບົດທີ 18 ນີ້ບໍ່ມີໃນ ພະຄຳເຫຼັ້ມອື່ນ ແຕ່ວ່າໃນປີ 1905 ນັກບູຮານຄະດີໃນປະເທດກຼີກຄົ້ນພົບເອກະສານທີ່ບອກວ່າ ຄາລີໂອນ ນັ້ນຖືກແຕ່ງຕັ້ງເປັນຜູ້ປົກຄອງແຂວງອະຂາຢາ ໃນວັນທີ 1 ເດືອນກໍລະກົດ ປີ ຄສ. 51. ແລ້ວ ເພິ່ນຮັບພາລະນັ້ນ ສອງປີ. ຄາລີໂອນມີອ້າຍຄົນໜຶ່ງຊື່ວ່າ ເຊເນກາທີ່ເປັນນັກປັດຊະຍາ. ເຊເນກາ ຂຽນວ່າ "ຄາລີໂອນເປັນຄົນສຸພາບແກ່ທຸກຄົນແລະບໍ່ມີໃຜປຽບທຽບໄດ້." ເຈົ້າຈັກກະພັດໂລມ ຮັກເຊເນກາຜູ້ເປັນອ້າຍນັ້ນຫຼາຍ.*

**8** ເຫັນວ່າ ຜູ້ປົກຄອງແຂວງຄາລີໂອນນັ້ນ ເປັນຄົນຮຽບຮ້ອຍດີ.
ກ. ອ້າຍຂອງເພິ່ນຄືໃຜ? ______________________________
ຂ. ແມ່ນໃຜທີ່ອ້າຍນັ້ນຫຼາຍ? ______________________________
ຄ. ຄາລີໂອນຖືກແຕ່ງຕັ້ງໄວ້ເປັນຜູ້ປົກຄອງແຂວງອະຂາຢາໃນປີໃດ? ______________
ງ. ຮັບພາລະນັ້ນ ຈັກປີ? ______________________________
ຈ. ນັກບູຮານຄະດີ ຄົ້ນພົບເອກະສານທີ່ກ່າວເລື່ອງນີ້ໃນປະເທດກຼີກ ປີໃດ? ___________

**9** ປະຊາຊົນໃນເມືອງໂກລິນໂທເສຍໃຈກັບຄົນຢິວທີ່ຂົ່ມເຫງໂປໂລ.
ກ. ເຂົາຈັບນາຍໂຮງທຳໃຫມ່ ຊື່ຫຍັງ? (ກຈກ 18:17) ____________________
ຂ. ເຂົາຈັບໄປເຮັດຫຍັງ? ______________________________
ຄ. ຂ້ຽນຕີຕໍ່ຫນ້າໃຜ? ______________________________
ງ. ຄາລີໂອນສະແດງທ່າທີຢ່າງໃດ? ________________________
ຈ. ແມ່ນໃຜເປັນນາຍໂຮງທຳກ່ອນໂຊຊະແທນ? (ກຈກ 18:8) ________________

**10** ຂໍກ່າວຊ້ຳວ່າ ເຫດການນີ້ເປັນເຫດການທີ່ສຳຄັນ ເພາະເປັນເທື່ອທຳອິດທີ່ສານໂລມເຂົ້າຂ້າງຄຼິດສະຕຽນ. ໃຫ້ອ່ານ ໂລມ 13:3-4
ກ. ແມ່ນພວກໃດທີ່ບໍ່ເປັນຫນ້າຢ້ານສຳລັບຄົນທີ່ເຮັດການດີ? (ຂໍ້ 3) ______________
ຂ. ຈິ່ງຖືວ່າຜູ້ປົກຄອງນັ້ນ ເປັນຜູ້ຮັບໃຊ້ໃຜ? (ຂໍ້ 4) ______________________

**11** ເນື່ອງຈາກຜູ້ປົກຄອງແຂວງອະຂາຢາ ຕັດສິນຢ່າງເປັນຜົນດີໃຫ້ແກ່ພວກຄຼິດສະຕຽນ ໂປໂລແລະຫມູ່ປະ ກາດພະທຳນັ້ນຈຶ່ງບໍ່ຕ້ອງເປັນຫ່ວງຫຼາຍ. ເຂົາສາມາດປະກາດພະຄຳຢ່າງເປີດເຜີຍໄດ້. ໃນ ໂລມ 16:1 ເຫັນວ່າມີຄຼິດສະຕະຈັກໃນເມືອງໃດອີກ?________________ ເບິ່ງຄືວ່າໂປໂລໄປປະກາດທີ່ເມືອງເກັນເຂໄອດ້ວຍ.

**12** ໃຫ້ອ່ານ 1 ກລທ 9:24-27 ໃນຕະຫຼອດ 4 ຂໍ້ນັ້ນເຫັນວ່າໂປໂລຍົກເລື່ອງກິລາເປັນຕົວຢ່າງ. ເຂດ ນັ້ນເປັນເຂດທີ່ມັກຫຼິ້ນກິລາໃນ ປີ ຄ.ສ. 51 ນັ້ນມີການແຂ່ງຂັນຄັ້ງຍິ່ງໃຫຍ່ (ຢ່າງກິລາໂອລິມປິກ). ໂປໂລອາດຈະສວຍໂອກາດເອົາເລື່ອງກິລາມາປຽບທຽບການແຂ່ງຂັນດ້ານຈິດວິນຍານ. ໃນ ໂລມ 9:26 ໂປໂລຍົກຄວາມປຽບທຽບຈາກນັກກິລາສອງຢ່າງໃດ?
______________________ ແລະ ______________________

**13** ທວນຄືນ. ເມື່ອໂປໂລຈະລາຈາກເມືອງໂກລິນໂທໄປ. ທີ່ເພິ່ນອອກໄປປ່າວປະກາດ ພະທຳ ເທື່ອທີສອງນີ້ຈວນຈະສຳເລັດ. ໂປໂລຂອບໃຈພະເຈົ້າເພື່ອຫຼາຍຢ່າງ ທີ່ມີຫຼາຍຄົນທີ່ເຊື່ອໄວ້ ວາງໃຈໃນພະເຈົ້າແລະຮັບບັບຕິສະມາ.

ກ. ມີອີກຄຼິດສະຕະຈັກໜຶ່ງໃນເມືອງໃດ? ________________________________

ຂ. ເພິ່ນອາດຈະປະກາດກັບຄົນທີ່ມາຮ່ວມການໃດໃນປີ ຄ. ສ. 51? ______________

ຄ. ໂປໂລຂຽນຈົດໝາຍຈັກສະບັບເຖິງຄຼິດສະຕະຈັກເທຊະໂລນິກຈາກເມືອງໂກລິນໂທ?

________________________________________________________

ງ. ຜູ້ປົກຄອງແຂວງອະຂາຢາທີ່ສະໜັບສະໜູນການປະກາດພະທຳຊື່ຫຍັງ? _________

ຈ. ໂປໂລເຫັນໃຜມາໜຸນໃຈໃນການນິມິດ? ____________________________

*ຈົ່ງຮັບພິຈາລະນາ*

<u>ໃຫ້ອ່ານ ໂລມ 13:1-7</u>

- *ເຫັນວ່າໂປໂລຍອມຢູ່ໃຕ້ການປົກຄອງຂອງລັດ ເຖິງວ່າເຂົາບໍ່ໄດ້ເປັນຄຼິດສະຕຽນກໍຕາມ. ເພິ່ນເຄີຍ ໄດ້ຮັບຜົນດີຈາກຜູ້ປົກຄອງແຂວງໃນເມືອງໂກລິນໂທ (ທີ່ຢູ່ໃນເວລາຂຽນຈົດໝາຍໂລມນັ້ນ). ໃນເມື່ອໂປໂລຂຽນໂລມ 13:3 ນັ້ນ ເພິ່ນອາດຈະນຶກເຖິງຄາລີໂອນນັ້ນບໍ່? (ບໍ່ຕ້ອງຂຽນຄຳ ຕອບ)*
- *ໃຫ້ນຶກເຖິງການຮັບຜິດຊອບຂອງຄຼິດສະຕຽນເຮົານີ້ຕໍ່ພັກແລະລັດ (ໂລມ 13:1) ຈະເຊື່ອຟັງແລະ ປະຕິບັດຕາມຢ່າງໃດ? (ກຈກ 4:19)*
- *ເຮົາຮັບຜົນດີຈາກລັດໃນດ້ານໃດແດ່?*
- *ປະສົບການຂອງໂປໂລໃນເມືອງໂກລິນໂທເປັນບົດຮຽນຢ່າງໃດ? (ເລື່ອງຜູ້ປົກຄອງແຂວງຄາລີ ໂອນເປັນຕົ້ນ).*
- *ໃຫ້ອ່ານຂໍ້ພະຄຳພີດັ່ງຕໍ່ໄປນີ້:*

| | |
|---|---|
| ມທ 22:21 | 1 ຕມທ 2:1-3 |
| ຕີໂຕ 3:1 | 1 ປຕ 2:13-14 ແລະ 17 |

**ຄຳຕອບ:**

**1** *ກ. ຮູບ 1 ຂ. ຮູບ 2*

**2** *ກ. ພະຜູ້ເປັນເຈົ້າ ຂ. ທາງນິມິດ*

**3** *ກ. ຢ້ານ ຂ. ຈິ່ງກ່າວຕໍ່ໄປ ຄ. ໂກລິນໂທ ງ. ຮູບ “ຈ”*

**4** *ກ. ໜຶ່ງປີກັບຫົກເດືອນ ຂ. ພະທຳຂອງພະເຈົ້າ*

**5** *ກ. ອະຂາຢາ ຂ. ຜິດກົດໝາຍ*

**6** *ກ. ຄາລີໂອນ ຂ. ບໍ່ຢາກເປັນຜູ້ຕັດສິນ ຄ. ຊາດຢິວ ງ. ຈາກສານ*

**7** *ກ. ແກ່ໂປໂລ ຂ. ຄົນຢິວທີ່ບໍ່ເຊື່ອ*

**8** *ກ. ເຊເນກາ ຂ. ເຈົ້າຈັກກະພັດໂລມ ຄ. ຄສ 51 ງ. 2 ປີ ຈ. 1905*

**9** *ກ. ໂຊຊະແທນ ຂ. ຂ້ຽນຕີ ຄ. ຕໍ່ໜ້າສານ ງ. ບໍ່ເຂົ້າຫຍຸ້ງກ່ຽວ ຈ. ກີສະໂປ*

**10** *ກ. ຜູ້ປົກຄອງ ຂ. ຜູ້ຮັບໃຊ້ຂອງພະເຈົ້າ*

**11** *ເມືອງເກັນເຂໄອ*

**12** *ຄົນທີ່ແລ່ນ ແລະ ນັກມວຍ*

**13** *ກ. ເກັນເຂໄອ ຂ. ແຂ່ງຂັນກິລາ ຄ. ສອງ ງ. ຄາລີໂອນ ຈ. ພະເຢຊູ*

**ການບ້ານບົດທີ 7 ພາກປາຍ**

# ການຂາບໄຫວ້ພະທຽມແລະຜິດຊາຍຍິງໃນເມືອງໂກລິນໂທ

*ຖ້າເຮົາຈະຮຽນເລື່ອງສະພາບການໃນບ່ອນໜຶ່ງບ່ອນໃດ ມີວິທີທາງສອງຢ່າງທີ່ຮູ້ໄດ້ຄື:*

- *ຈົດໝາຍ ທີ່ໂປໂລຂຽນໄປຫາຄຣິດສະຕະຈັກນັ້ນ ຈາກບ່ອນອື່ນ.*
- *ຈົດໝາຍທີ່ໂປໂລຂຽນຈາກຄຣິດສະຕະຈັກນັ້ນໄປເຖິງບ່ອນອື່ນ.*

*ໃນການຮຽນຮູ້ເລື່ອງຄຣິດສະຕະຈັກໃນໂກລິນໂທ ເຮົາຕ້ອງຮຽນຈາກທັງສອງວິທີ.*

**1** ຕົວຢ່າງ ພວກເຮົາຫາຈົດໝາຍທີ່ໂປໂລຂຽນໄປເຖິງຄຣິດສະຕະຈັກໃນເມືອງໂກລິນໂທໄດ້ງ່າຍ ຄື ຈົດໝາຍໃດ? ________________________ ແລະ _____________________

**2** ຈົດໝາຍທັງສອງສະບັບນັ້ນ ເຮົາຈະເອົາໄວ້ຮຽນໃນເວລາຮຽນເລື່ອງການເດີນທາງປະກາດພະທຳ ເທື່ອທີ 3. ສ່ວນຈົດໝາຍທີ່ໂປໂລຂຽນຈາກເມືອງໂກລິນໂທໃນເມື່ອໄປປະກາດພະທຳເທື່ອທີສອງ ທີ່ເຮົາກຳລັງຮຽນ ໃນຫຼັກສູດນີ້ ທ່ານຮູ້ຢູ່ແລ້ວວ່າເພິ່ນຂຽນໄປເຖິງເມືອງໃດ. (ຕື່ມຄວາມທີ່ຂາດ)

ກ. ຈົດໝາຍທີ່ຂຽນເຖິງຄຣິດສະຕະຈັກໃນເມືອງ ______________________ ສະບັບຕົ້ນ.

ຂ. ຈົດໝາຍທີ່ຂຽນເຖິງຄຣິດສະຕະຈັກໃນເມືອງ ____________________ ສະບັບທີສອງ.

**3** ກ. ໂປໂລຂຽນຈົດໝາຍໄປເຖິງຄຣິດສະຕະຈັກໂລມ ຈາກເຮືອນຂອງໃຜ? (ໂລມ 16:23)

____________________________________________________________

ຂ. ຄາໂຢເປັນຜູ້ບຳລຸງຫຍັງ? __________________________________________

ຄ. ຄາໂຢເປັນຜູ້ໜຶ່ງທີ່ຮັບບັບຕິສະມາໃນຄຣິດສະຕະຈັກໃດ? (1 ກລທ 1:14) __________

ງ. ດັ່ງນັ້ນ ເຫັນວ່າໂປໂລຂຽນຈົດໝາຍເຖິງຄຣິດສະຕະຈັກໂລມຈາກເມືອງໃດ? ________

ແຕ່ຂຽນໃນໂອກາດທີ່ໄປປະກາດເທື່ອທີສາມ!

ທີ່ຈະຮູ້ຜູ້ຮັບຈົດໝາຍນັ້ນກໍຮູ້ໄດ້ງ່າຍ - ເອົາຕາມຊື່ຂອງພະທຳນັ້ນ ແຕ່ທີ່ຈະຮູ້ສະຖານທີ່ໂປໂລຢູ່ເວລາ ຂຽນຈົດໝາຍນັ້ນກໍຍາກ. ເພື່ອໃຫ້ທ່ານຈື່ຈຳໄດ້ດີ ໃຫ້ທ່ານເບິ່ງຕາຕະລາງຕໍ່ໄປນີ້:

| ຍຸກໃນຊີວິດຂອງໂປໂລ | ລຳດັບ | ຂຽນໄປເຖິງໃຜ | ຂຽນຈາກບ່ອນໃດ | ອາຍຸ |
|---|---|---|---|---|
| ປະກາດເທື່ອທີໜຶ່ງ | 1 | ຄາລາເຕຍ | ອັນຕີໂອເຂຍ (ແຂວງຊີເລຍ) | 49 |
| ປະກາດເທື່ອທີສອງ | 2 | ເທຊະໂລນິກສະບັບຕົ້ນ | ໂກລິນໂທ | 51 |
| ----- " ----- | 3 | ເທຊະໂລນິກສະບັບສອງ | ----- " ----- | 52 |
| ປະກາດເທື່ອທີສາມ | 4 | ໂກລິນໂທ ສະບັບຕົ້ນ | ເອເຟໂຊ | 56 |
| ----- " ----- | 5 | ໂກລິນໂທ ສະບັບສອງ | ມາເກໂດເນຍ | 56 |
| ----- " ----- | 6 | ໂລມ | ໂກລິນໂທ | 57 |
| ຖືກຂັງຄຸກເທື່ອທີໜຶ່ງ | 7 | ເອເຟໂຊ | | |
| ----- " ----- | 8 | ໂກໂລຊາຍ | | |
| ----- " ----- | 9 | ຟີເລໂມນ (ໃນໂກໂລຊາຍ) | ບໍ່ແນ່ | 61-62 |
| ----- " ----- | 10 | ຟີລິບປອຍ | | |
| ຍຸກທີ່ເສລີ | 11 | ຕີໂຕ | | 63-66 |
| ----- " ----- | 12 | ຕີໂມທຽວ ສະບັບຕົ້ນ | | |
| ຖືກຂັງຄຸກເທື່ອສຸດທ້າຍ | 13 | ຕີໂມທຽວ ສະບັບສອງ | ໂລມ | 67 |

**4** ຕາມຕາຕະລາງນັ້ນ ໂປໂລຂຽນຈົດໝາຍຈັກສະບັບ? ____________________________

**5** ກ. ໂປໂລຂຽນຈັກສະບັບໃນເວລາເດີນທາງໄປປ່າວປະກາດເທື່ອທີໜຶ່ງ? _______________

ຂ. ຂຽນຈັກສະບັບເວລາໄປປະກາດເທື່ອທີສອງ? ________________________________

ຄ. ຂຽນຈັກສະບັບເວລາໄປປ່າວປະກາດເທື່ອທີສາມ? ____________________________

*ສາມາດຈື່ໄດ້ງ່າຍຄື ເທື່ອທີໜຶ່ງຂຽນໜຶ່ງ ເທື່ອທີສອງຂຽນສອງ ເທື່ອທີສາມຂຽນສາມສະບັບ.*

**6** ໃຫ້ອ້າງເຖິງຕາຕະລາງເພື່ອຈະຮູ້ຕອບຄຳຖາມຕໍ່ໄປນີ້:

ກ. ຈົດໝາຍທຳອິດທີ່ໂປໂລຂຽນນັ້ນ ເພິ່ນຂຽນໄປເຖິງໃຜ? ________________________

ຂ. ຂຽນເມື່ອກັບມາຈາກປະກາດ ເທື່ອທີໜຶ່ງ. ຂຽນຈາກບ່ອນໃດ? ___________________

ຄ. ໃນເວລານັ້ນ ໂປໂລອາຍຸ ປະມານຈັກປີ? ___________________________________

**7** ກ. ເມື່ອອອກໄປປະກາດພະທຳເທື່ອທີສອງ ໂປໂລຂຽນສອງສະບັບໃດ? _______________

ຂ. ຂຽນຈາກບ່ອນໃດ? ___________________________________________________

ຄ. ຂຽນເຖິງຄຶດສະຕະຈັກໃດ? ____________________________________________

**8** ເທື່ອທີສາມທີ່ໂປໂລອອກໄປປະກາດ ເພິ່ນຂຽນ 3 ສະບັບ.

ກ. ສອງສະບັບຂຽນໄປເຖິງຄຼິດສະຕະຈັກດຽວ ຄືຄຼິດສະຕະຈັກໃດ? ________________

ຂ. ອີກໜຶ່ງສະບັບນັ້ນ ເພິ່ນຂຽນໃນເວລາປະຈຳຢູ່ບ່ອນໃດ? ______________________

ຄ. ຂຽນໄປເຖິງຄຼິດສະຕະຈັກໃດ? ______________________________________

**9** ກ. ທີ່ໂປໂລອອກໄປປະກາດເທື່ອທີສອງແລະສາມ ເພິ່ນຂຽນຈັກສະບັບທັງໝົດ? _______

ຂ. ຂຽນສະບັບໃດແດ່ຈາກເມືອງໂກລິນໂທ? _______________________________

ຄ. ຂຽນສະບັບໃດແດ່ໄປເຖິງເມືອງໂກລິນໂທ? _____________________________

**10** ເຫັນວ່າທັງ 5 ສະບັບທີ່ໂປໂລຂຽນເວລາໄປປະກາດເທື່ອທີສອງແລະເທື່ອທີສາມນັ້ນ ມີສ່ວນກ່ຽວເລື່ອງເມືອງດຽວ (ຫຼືຂຽນຈາກເມືອງນັ້ນຫຼືຂຽນໄປເຖິງເມືອງນັ້ນ) ຄືເມືອງໃດ? _______






ເອົາເຮືອຂ້າມບົກເພື່ອໄປໂລມໂດຍທາງລັດຜ່ານເມືອງໂກລິນໂທ

*ເມືອງໂກລິນໂທຕັ້ງໄວ້ທີ່ດິນຕໍ່ເຂດ ແລະ ກົ່ວເຂົ້າລະຫວ່າງຕອນດິນໃຫຍ່ສອງຕອນ. ເຮືອລຳໃດທີ່ບໍ່ຢາກໄປທາງໄກໄຕ້ແຂວງອະຂາຢາ ເຂົາຈະເອົາເຮືອນັ້ນຜ່ານຈາກ ອ່າວຕາເວັນຕົກໄປຫາອ່າວຕາເວັນອອກທາງບົກ. ເຂົາເອົາໄມ້ກົ້ງໃສ່ລຸ່ມເຮືອເພື່ອ ລາກເຮືອຂ້າມບົກ. ໃຊ້ແຕ່ແຮງງານທາດ. ດັ່ງນັ້ນເມືອງໂກລິນໂທເປັນເມືອງໃຫຍ່ຫຼາຍ ມີຄົນໄປມາຢູ່ສະເໝີ. ມີປະຊາຊົນປະມານ 250,000 ຄົນ.*

**11** ກ. ໂກລິນໂທຕັ້ງໄວ້ໃນຕອນດິນຍາວທີ່ຕິດຕໍ່ລະຫວ່າງແຂວງອະຂາຢາເໜືອ ແລະດອນອະຂາຢາໄຕ້. ເຈົ້າຂອງເຮືອທີ່ບໍ່ຢາກເວັ້ນໄປທາງໄກ ອາດຈະເອົາເຮືອຜ່ານຈາກອ່າວທາງຕາເວັນຕົກໄປອ່າວຕາ ເວັນອອກໄດ້ຢ່າງໃດ? ____________________________

ຂ. ເຂົາໃຊ້ກຳລັງໃຜ? ____________________________________________

ຄ. ເຮືອທີ່ໄປທິດຕາເວັນຕົກ ເຂົາຈະໄປກຸງໃດ? ______________________________

ງ. ເຂົາເອົາເຮືອຂ້າມບົກເປັນເມືອງໃດ? __________________________________

ຈ. ໂປໂລຕັ້ງຄຼິດສະຕະຈັກໃນເມືອງໂກລິນໂທ ແລະເມືອງໃດອີກ? (ໂລມ 16:1) _______

ສ. ໂກລິນໂທມີປະຊາຊົນປະມານຈັກຄົນ? _________________________________

ຊ. ເປັນເມືອງຫຼວງແຂວງໃດ? ________________________________________

**12** ເປັນເມືອງໃຫຍ່ຢ່າງນັ້ນ ກໍເຕັມໄປດ້ວຍການອະທຳທຸກຢ່າງມີຢ່າງໃດ? (ໃຫ້ອ່ານ ໂລມ 1:29 ແລ້ວເລືອກເອົາຄວາມທີ່ຖືກ)

ກ. ການຊົ່ວຮ້າຍ ຂ. ຄວາມສຸພາບ ຄ. ຄວາມໂລບ ງ. ເຫິງສາ

ຈ. ການຂ້າຟັນ ສ. ການລໍ້ລວງ ຊ. ການສັບສົ່ ຍ. ຄວາມດີ

**13** ເຂົ້າຮ່ວມໃນບາບທຸກປະການ ແຕ່ເປັນຕົ້ນບາບເລື່ອງເພດ. ໃຫ້ອ່ານ ໂລມ 1:26-27 ທີ່ກ່າວເລື່ອງການຮ່ວມເພດລະຫວ່າງຊາຍກັບຊາຍ ແລະຍິງກັບຍິງ.

ກ. ໂປໂລຂຽນຈົດໝາຍນີ້ຈາກເມືອງໃດ? (ເບິ່ງຕາຕະລາງກໍໄດ້) _________________

ຂ. ຊາວໂກລິນໂທຊື່ເໝັນທົ່ວໄປວ່າ ເປັນຄົນອະທຳເລື່ອງເພດ ເຂົາຖືວ່າຜູ້ໃດທີ່ຢູ່ກິນຢ່າງຊາວໂກ ລິນໂທ ເປັນຄົນຢ່າງໃດ? ______________________________________

**14** ໃນຈົດໝາຍເຖິງໂກລິນໂທສະບັບຕົ້ນ ໂປໂລຍົກເລື່ອງບາບໃນຄຼິດສະຕະຈັກນັ້ນ.

ກ. ມີຊາຍຄົນໜຶ່ງໃນຄຼິດສະຕະຈັກເອົາໃຜເປັນເມຍ? (1 ກລທ 5:1) _______________

ຂ. ແທນທີ່ຄຼິດສະຕະຈັກຈະເປັນທຸກຮ້ອນໃຈ ເຂົາເປັນຢ່າງໃດ? (1 ກລທ 5:2) _________

ຄ. ເຂົາຄວນຈະເຮັດຢ່າງໃດກັບຜູ້ທີ່ເຮັດຜິດຢ່າງນັ້ນ? ___________________________

**15** ໃນຈົດໝາຍເຖິງໂລມ ໂປໂລເຕືອນເລື່ອງບາບອີກຢ່າງໜຶ່ງທີ່ມີສ່ວນກ່ຽວຂ້ອງກັບການຜິດຊາຍຍິງ.

ກ. ເຂົາເຮັດຫຍັງປັ້ນແທນສະງ່າລາສີຂອງພະເຈົ້າ? (ໂລມ 1:23) _________________

ຂ. ໃນ 1 ກລທ 8:1 ໂປໂລເຕືອນເລື່ອງການຖວາຍເຄື່ອງບູຊາແກ່ຫຍັງ? _____________

*ນອກເມືອງໂກລິນໂທຫນ້ອຍໜຶ່ງມີພູສູງ. ເຖິງພູນັ້ນມີວັດຂອງເທບພະທິດາ ອາໂຟດິດທີ່ຍ້ອງຍໍເລື່ອງ ເພດ. ມີຍິງໂສເພນີ 1000 ຄົນທີ່ບໍລິການໃນວັດນັ້ນ. ມີພະທຽມອີກເປັນຜູ້ຊາຍຊື່ວ່າ ອາໂປໂລ. ວັດຂອງອາໂປໂລກໍມີຮູບຜູ້ຊາຍທີ່ເປືອຍກາຍ ຈຶ່ງເຮັດໃຫ້ຜູ້ຊາຍຕື່ນເຕັ້ນຢາກຮ່ວມເພດຊາຍກັບຊາຍ ທັງມີກະເທີຍໜຸ່ມບໍລິການໃນວັດນັ້ນອີກດ້ວຍ.*

**16** ແມ່ນເມືອງໃດທີ່ເປັນເອກໃນການຜິດຊາຍຍິງທຸກຊະນິດ? ________________________



**17** ກ. ຮູບເບື້ອງໃດ ເປັນຮູບຜູ້ຊາຍ? ______________________________________

ຂ. ຮູບພະນັ້ນຊື່ຫຍັງ? ______________________________________________

ຄ. ຮູບເທບພະທິດາຢູ່ເບື້ອງໃດ? ______________________________________

ງ. ຊື່ຫຍັງ? _____________________________________________________

ຈ. ເມື່ອຄົນໃນໂກລິນໂທໄປວັດ ເຂົາໄປບູຊາພະທຽມທັງໄປຫລິ້ນຫຍັງ? _____________

**18** ເພາະເຫດນັ້ນ ໂປໂລເຕືອນເລື່ອງບາບສອງປະການ ຄືການຜິດຊາຍຍິງ ແລະການບູຊາພະທຽມ

ກ. ໃນ 1 ກລທ 6:9 ທັງຄົນຫລິ້ນຊູ້ແລະຄົນຂາບໄຫວ້ພະທຽມ ຈະບໍ່ມີສ່ວນໃນ ລາດຊະອານາຈັກ ໃດ? ______________________________________________

ຂ. ໃນຂໍ້ດຽວເຕືອນເລື່ອງ ຄົນຜິດຈາກໃຜ? ___________________________________

ຄ. ແລະເຕືອນເລື່ອງຊາຍຫລິ້ນຢ່າງໃດ? ______________________________________

**19** ສະຫລູບເລື່ອງ. ໂປໂລເຕືອນພີ່ນ້ອງໃນຄຼິດສະຕະຈັກໂກລິນໂທເລື່ອງການຂາບໄຫວ້ ________________ ແລະ ການຜິດ _________________ ເປັນຕົ້ນ. (ຕື່ມຄວາມທີ່ຂາດ)

*ຈົ່ງຮັບພິຈາລະນາ*

*ໃຫ້ອ່ານໂລມ 1:18-32*

- *ໂປໂລຢູ່ໃນເມືອງໂກລິນໂທ ເວລາຂຽນພະທຳໂລມ ຢ່າງນັ້ນເພິ່ນເຫັນຮູ້ສະພາບແວດລ້ອມດີ. ໃຫ້ທ່ານຕຽມຕົວພ້ອມເພື່ອຈະແລກຄວາມຄິດເຫັນກ່ຽວກັບປະເພນີຊາວໂກລິນໂທ.*
- *ໃຫ້ອ່ານໂລມ 1:16-17 ເຫັນວ່າໂປໂລເຊື່ອໝັ້ນໃນຂ່າວປະເສີດ. ໂປໂລອາດເຄີຍເຫັນອຳ ນາດຂອງຂ່າວປະເສີດໃນຊີວິດຂອງພີ່ນ້ອງທີ່ມາຮັບເຊື່ອໃນເມືອງໂກລິນໂທ. ແຕ່ກ່ອນເຂົາດຳເນີນຊີວິດຢ່າງໃດ ແລະເມື່ອບັງເກີດໃຫມ່ໃນພະເຢຊູ ເຂົາປ່ຽນຢ່າງໃດ? (ບໍ່ຕ້ອງຂຽນຄຳຕອບ) ໃຫ້ອ່ານ ໂລມ 5:20 ແລະ 1 ກລທ 1:4-9 ດ້ວຍ.*
- *ໃນການຮຽນເທື່ອໜ້າ ຈະຮຽນຕໍ່ເລື່ອງພົບຮັບຂອງຄຳເທດສະໜາໃນເມືອງ ໂກລິນໂທ.*

ຄຳຕອບ:

**1** *1 ໂກລິນໂທ ແລະ 2 ໂກລິນໂທ*

**2** *ກ. ເທຊະໂລນິກ ຂ. ເທຊະໂລນິກ*

**3** *ກ. ທ່ານຄາໂຢ ຂ. ຄູ້ດສະຕະຈັກ ຄ. ໂກລິນໂທ ງ. ໂກລິນໂທ*

**4** *13*

**5** *ກ. 1 ຂ. 2 ຄ. 3*

**6** *ກ. ຄູ້ດສະຕະຈັກຄາລາເຕຍ ຂ. ອັນຕີໂອເຂຍ (ແຂວງຊີເລຍ) ຄ. 49 ປີ*

**7** *ກ. 1 ທຊບ ແລະ 2 ທຊບ ຂ. ໂກລິນໂທ ຄ. ເທຊະໂລນິກ*

**8** *ກ. ໂກລິນໂທ ຂ. ໂກລິນໂທ ຄ. ໂລມ*

**9** *ກ. 5 ຂ. 1 ເທຊະໂລນິກ 2 ເທຊະໂລນິກ ໂລມ ຄ. 1 ກລທ 2 ກລທ*

**10** *ໂກລິນໂທ*

**11** *ກ. ເຂົາເອົາໄມ້ກົ້ງໃສ່ກ້ອງເຮືອລາກຂ້າມບົກ. ຂ. ຂ້າທາດ ຄ. ໂລມ*
*ງ. ໂກລິນໂທ ຈ. ເກັນເຂໄອ ສ. 250,000 ຊ. ອະຂາຢາ*

**12** *ກ ຄ ງ ຈ ສ ຊ ຖືກ*

**13** *ກ. ໂກລິນໂທ ຂ. ຫລິ້ນຊູ້ (ຄຳຄ້າຍຄືກໍໄດ້)*

**14** *ກ. ເອົາແມ່ນ້ຳ ຂ. ອວດຕົວຂຶ້ນ ຄ. ຕັດອອກເສຍຈາກພວກເຂົາ*

**15** *ກ. ຮູບຕ່າງໆ ຂ. ແກ່ພະທຽມ*

**16** *ໂກລິນໂທ*

**17** *ກ. ເບື້ອງຊ້າຍ ຂ. ອາໂປໂລ ຄ. ຂວາ ງ. ອາໂຟດິດ*
*ຈ. ຫລິ້ນໂສເພນີ ແລະ ກະເທີຍ*

**18** *ກ. ອານາຈັກຂອງພະເຈົ້າ ຂ. ຜິດຈາກຜົວເມຍກັນ*
*ຄ. ຊາຍຫລິ້ນກັບຍິງ ແລະ ຊາຍຫລິ້ນກັບຊາຍ*

**19** *ພະທຽມ... ຊາຍຍິງ*

**ໃນການປະຊຸມບົດທີ 7**

# ການຮັກສາຮ່າງກາຍໄວ້ເພື່ອພະເຈົ້າ

*ໂປໂລຮູ້ວ່າສັງຄົມໃນເມືອງໂກລິນໂທ ຊົ່ວຊ້າ ແຕ່ເພິ່ນເຊື່ອວ່າໂດຍພະຄຸນຂອງພະອົງ ພີ່ນ້ອງທີ່ບັງເກີດໃນພະເຍຊູໃນເມືອງໂກລິນໂທ ຈະກາຍເປັນຄົນໃຫມ່ໄດ້.*

## ສັງຄົມຊົ່ວຊ້າໃນເມືອງໂກລິນໂທ

**1** ໃນພາກ (ຈົ່ງຮັບພິຈາລະນາ) ສຸດທ້າຍຂອງການບ້ານບົດທີ 7 ພາກປາຍທ່ານອາດຈະຮັບພິຈາລະນາ ເລື່ອງສະຖານະການ ສັງຄົມໃນເມືອງໂກລິນໂທແລ້ວ. ເຫດການນັ້ນປາກົດອອກມາໃນພະທຳທີ່ໂປ ໂລຂຽນຈາກເມືອງໂກລິນໂທ (1 ເທຊະໂລນິກ ແລະ 2 ເທຊະໂລນິກ ແລະ ພະທຳໂລມ) ແມ່ນລະ ອີກໃນຈົດຫມາຍທີ່ໂປໂລຂຽນໄປເຖິງໂກລິນໂທທັງສອງສະບັບ.
ໃຫ້ເປີດອ່ານໂລມ 1:23-32

ກ. ໂລມ 1:23-25 ກ່າວເລື່ອງການນະມັດສະການຫຍັງ? ______________________

ຂ. ໂລມ 1:26-27 ກ່າວເລື່ອງບາບດ້ານໃດ? ______________________________

ຄ. ໂລມ 1:28-32 ມີຫຍັງແດ່? ____________________________________

**2** ຖ້າອ່ານໂລມບົດທີ 1:18-32 ເຮົາເຂົ້າໃຈຢ່າງຈະແຈ້ງເລື່ອງບາບທີ່ໂປໂລເຫັນໃນບ່ອນອາໄສເວລານັ້ນຄືເມືອງໂກລິນໂທ. ຈົດຫມາຍທີ່ຂຽນໄປເຖິງພີ່ນ້ອງໃນເມືອງໂກລິນໂທກໍຢັ້ງຢືນໃນ 1 ກລທ 5:9-13

ກ. ມີບາບຢ່າງຊົ່ວຊ້າຢ່າງໃດໃນຄຣິດສະຕະຈັກໂກລິນໂທ? (1 ກລທ 5:1) ___________

ຂ. ໂປໂລຫ້າມບໍ່ໃຫ້ຄົບຫາກັບຄຣິດສະຕຽນທີ່ຫລິ້ນຊູ້. ເປັນຫຍັງໂປໂລບໍ່ຫ້າມຄົບຫາກັບຊາວໂລກທີ່ຫລິ້ນ ຊູ້ຄືກັນ? (1 ກລທ 5:10) ______________________________

*ພະເຍຊູມີທ່າທີດຽວກັນໃນ ມທ 9:10-13*

ຄ. ບໍ່ເຫັນເພິ່ນຖິ້ມໃຈເກົ່າເອົາໃຈໃຫມ່ ດັ່ງນັ້ນໂປໂລປຶກສາໃຫ້ຄຣິດສະຕະຈັກໂກລິນໂທ ຕັດສິນຄົນນັ້ນຢ່າງໃດ? (1 ກລທ 5:2) ____________________________________

ງ. ທ່າທີຂອງໂປໂລຕໍ່ຄົນທີ່ຕົກໃນບາບ ແລ້ວກັບຄືນມາເປັນຢ່າງ? (2 ກລທ 2:5-10)

______________________________________________________________

ຈ. ຖ້າມີຄົນໃດໃນຄຣິດສະຕະຈັກຕົກບາບຫນັກ ເຮົາຄວນເຮັດຢ່າງໃດ? ______________

______________________________________________________________

**3** ໃນ 1 ກລທ 6:9-20 ໂປໂລກ່າວເລື່ອງດຽວກັນອີກ. ໃນຂໍ້ 9-11 ເປັນຕົ້ນໂປໂລຍົກເລື່ອງ ບາບທີ່ມີທົ່ວໄປໃນເມືອງໂກລິນໂທ. ໂປໂລບອກວ່າ “ເມື່ອກ່ອນມີບາງຄົນໃນພວກເຈົ້າເປັນຄົນຢ່າງນັ້ນ” (ຕົ້ນຂໍ້ 11)

ກ. ໃຫ້ປຶກສາຫາລືກັນເລື່ອງສະຖານະການໃນສາສະໜາຊາວໂກລິນໂທທີ່ຮຽນມາໃນການບ້ານ ບົດທີ 7 ພາກປາຍ. ______________________

ຂ. ໃນທຸກວັນນີ້ມີເຫດການຄ້າຍຄືກັນນັ້ນບໍ່? ______________________

ຄ. ໃນຄູິດສະຕະຈັກມີບໍ່? ______________________

ງ. ໃນຂໍ້ 11 ເຫັນວ່າພີ່ນ້ອງທີ່ໄດ້ຮັບເຊື່ອໃນພະເຢຊູໄດ້ຮັບການຫຍັງ? ______________________

ຈ. ໄດ້ຖືກຊົງຕັ້ງໄວ້ສຳລັບໃຜ? ______________________

ສ. ໄດ້ຖືກຊົງນັບເປັນຄົນຢ່າງໃດ? ______________________

ຊ. ໃນນາມຂອງໃຜ? ______________________

## ການຮັກສາຮ່າງກາຍ

**4** ມີບາງຄົນທີ່ເຫັນວ່າ ຄູິດສະຕຽນເຮົາໄດ້ລອດຈາກໂທດບາບໂດຍເຊື່ອໄວ້ວາງໃຈໃນພະຄຸນຂອງພະເຢຊູ. ເຮົາໄດ້ລອດໂດຍທາງພະຄຸນນັ້ນ ແຕ່ວ່າມີຄູິດສະຕຽນບາງຄົນໃນໂກລິນໂທທີ່ແກ້ຕົວວ່າ ພະເຢຊູຮັບ ໂທດບາບເຮົາແລ້ວ ດັ່ງນັ້ນ ເຮົາເຮັດບາບຕາມໃຈກໍໄດ້. ໃຫ້ອ່ານ 1 ກລທ 6:12-20

ກ. ຄົນທີ່ຄິດຢ່າງນັ້ນເຄີຍເວົ້າຢ່າງໃດ? (ຂໍ້ 12 ໃນວົງຢືມ “”)

______________________

ຂ. ໂປໂລຕອບວ່າຢ່າງໃດ? ______________________

ແລະ ອີກ ______________________

**5** ກ. ໃນຂໍ້ 13 ອາຫານມີໄວ້ສຳລັບຫຍັງ? ______________________

ຂ. ຮ່າງກາຍມີໄວ້ສຳລັບຫຍັງ? ______________________

**6** ພະເຈົ້າສ້າງໃຫ້ຮ່າງກາຍຂອງເຮົາຕ້ອງການອາຫານ ແລະພະເຈົ້າສ້າງໃຫ້ເຮົາຢາກຮ່ວມເພດດ້ວຍ. ຄວາມຢາກໄດ້ທັງ 2 ປະການນັ້ນ ໃຊ້ຢ່າງເໝາະສົມກໍໄດ້ ຫຼືໃຊ້ຢ່າງບໍ່ເໝາະສົມກໍມີດ້ວຍ.

ກ. ມທ 6:11 ອ້າງເຖິງສິ່ງໃດທີ່ເຮົາຕ້ອງການ? ______________________

ຂ. ຖ້າມີອາຫານປະຈຳວັນ ເປັນການເໝາະສົມບໍ່? ______________________

ຄ. ເຮັບເລີ 13:4 ອ້າງເຖິງອາຫານຫຼືການຮ່ວມເພດ? ______________________

ງ. ຖ້າຢູ່ໃນສະພາບລະຫວ່າງຜົວເມຍ ເປັນການເໝາະສົມບໍ່? ______________________

*ແຕ່ຖ້າເຮົາກິນແລະດື່ມຫຼາຍເກີນໄປ ກໍບໍ່ເຫມາະສົມ. ຖ້າເຮົາຫລິ້ນຊູ້ ຫຼືຜິດຊາຍຍິງກໍເປັນ ການບໍ່ເຫມາະສົມດ້ວຍ. ມະນຸດເຮົາຕ້ອງກິນອາຫານຈຶ່ງຈະຮັກສາຮ່າງກາຍໄດ້ ແຕ່ວ່າບໍ່ຈຳເປັນຕ້ອງມີເມຍ. ຢູ່ເປັນໂສດກໍໄດ້.*

**7** ຖ້າເຮົາກິນອາຫານປະຈຳວັນເປັນການເຫມາະສົມ. ຖ້າເຮົານອນກັບເມຍຂອງເຮົາກໍເປັນການເຫມາະສົມ

ກ. 1 ກລທ 6:9-10 ອ້າງເຖິງການເຫມາະສົມ ຫຼືບໍ່ເຫມາະສົມ? ___________________

ຂ. ສຸພາສິດ 23:21 ເດ? ___________________________________________

ຄ. ໃນຟີລິບປອຍ 3:19 ຄົນເຫຼົ່ານັ້ນນັບຖືທ້ອງເຂົາເອງຢ່າງເປັນຫຍັງ? _______________

**8** ໃນສອງຮູບຕໍ່ໄປນີ້ ຄົນໃດຖືກທົດລອງຢາກໄດ້ເກີນກວ່າທີ່ເຫມາະສົມ? ______________





**9** ບໍ່ມີເມືອງໃດທີ່ຊົ່ວຊ້າກວ່າໂກລິນໂທ. ແຕ່ໂປໂລເຊື່ອວ່າພະເຈົ້າຈະສ້າງໃຫ້ເມືອງນັ້ນດີຄືນໄດ້ອີກ. ໂປໂລບໍ່ຢ້ານ.

ກ. ໃນ ໂລມ 1:16 ໂປໂລເຊື່ອວ່າ ອັນໃດເປັນລິດເດດຂອງພະເຈົ້າເພື່ອໃຫ້ທຸກຄົນທີ່ເຊື່ອຮັບຄວາມພົ້ນ? ___________________________________________

ຂ. ເປັນຫຍັງໂປໂລແນ່ໃຈເລື່ອງນັ້ນ? (1 ກລທ 6:11) __________________________

___________________________________________________________

**10** ໃນ 1 ກລທ 6:12-20 ນີ້ ໂປໂລຍົກເຫດຜົນ 4 ປະການທີ່ເຮົາຄວນຮັກສາຮ່າງກາຍໄວ້ເພື່ອພະເຈົ້າ.

ກ. ໃນ 1 ກລທ 6:13 ຮ່າງກາຍຂອງເຮົາມີໄວ້ສຳລັບໃຜ? ______________________

*ຖ້າຮ່າງກາຍເຮົາມີໄວ້ສຳລັບພະເຈົ້າ ເຮົາຈະຮັບໃຊ້ພະເຈົ້າໃນຫຼາຍດ້ານ.*
*ໃຫ້ແລກປ່ຽນຄວາມ ຄິດເຫັນໃນເລື່ອງການຮັບໃຊ້ພະເຈົ້າ.*

ຂ. ໃນ 1 ກລທ 6:14 (ແລະ 1 ກລທ 15:42-44 ດ້ວຍ) ຮ່າງກາຍຂອງເຮົາທີ່ຕາຍໄປແລ້ວ ຈະເປັນຢ່າງໃດເມື່ອພະເຢຊູສະເດັດມາອີກ? ______________________________

*ຮ່າງກາຍຂອງເຮົາບໍ່ແມ່ນທີ່ຈະໃຊ້ຊົ່ວຄາວແລ້ວຖິ້ມ ແຕ່ເມື່ອພະອົງສະເດັດມາອີກ.*
*ຈະຄືນຂຶ້ນມາດ້ວຍສະງ່າລາສີ.*

ຄ. ໃນ 1 ກລທ 6:15-18 ຮ່າງກາຍຂອງເຮົາເປັນອະໄວຍະວະໃດ? ________________

*ດັ່ງນັ້ນ ຄວນທີ່ຈະຮັກສາຕົວບໍ່ໃຫ້ເປັນອະໄວຍະວະໃນການເຮັດບາບ.*

ງ. ໃນ 1 ກລທ 6:19-20 ຮ່າງກາຍຂອງເຮົາບໍ່ແມ່ນຂອງເຮົາເອງ ແຕ່ແມ່ນໃຜສະຖິດຢູ່ໃນພວກເຮົາ? ______________________________________________________

*ພະອົງຊື້ເຮົາໄວ້ດ້ວຍລາຄາສູງ!*

ເພື່ອຈະໃຫ້ທ່ານຫາເຫດຜົນ 4 ປະການນັ້ນໄດ້ງ່າຍ ໃຫ້ຂຽນດັ່ງຕໍ່ໄປນີ້:

| | | | |
|---|---|---|---|
| ຂຽນ | "ເຫດ 1" | ໃສ່ຂອບເຈ້ຍຂ້າງ | 1 ກລທ 6:13 |
| ຂຽນ | "ເຫດ 2" | ຂ້າງ | 1 ກລທ 6:14 |
| ຂຽນ | "ເຫດ 3" | ຂ້າງ | 1 ກລທ 6:15-18 |
| ຂຽນ | "ເຫດ 4" | ຂ້າງ | 1 ກລທ 6:19-20 |

*ແນ່ນອນວ່າ ພະຍາມານຈະສວຍໂອກາດທົດລອງຫຼືດສະຫຼຽນເຮົາທຸກຄົນໃນດ້ານເນື້ອໜັງ. ອາດຈະເປັນດ້ານຕັນຫາ ອາດຈະເປັນໃນດ້ານການກິນແລະດື່ມຫຼາຍເກີນໄປ ຫຼືຢ່າງອື່ນໆ. ຄຳທີ່ໂປໂລກ່າວນີ້ເປັນປະໂຫຍດໃນທຸກວັນນີ້ອີກດ້ວຍ.*
*ໃຫ້ຄົນໜຶ່ງອ່ານ 1 ກລທ 10:13 ແລ້ວອ້ອນວອນດ້ວຍກັນ.*

- ກັບໄປບ້ານແລ້ວໃຫ້ເສັງບົດທີ່ຂຶ້ນກັບບົດຮຽນນີ້.
- ອາທິດໜ້າຈະເສັງສຸດທ້າຍ ດັ່ງນັ້ນໃຫ້ທ່ານຮຽນບົດທີ 8 ດີ ໆ ເພື່ອຈະເສັງໄດ້ໃນເລື່ອງຕໍ່ໄປນີ້:

    ທີ່ໂປໂລອອກໄປປະກາດພະທຳເທື່ອທີສອງ

    ຈົດໝາຍທີ່ໂປໂລຂຽນໃນເວລານັ້ນ

ຄຳຕອບ:

**1** *ກ. ສິ່ງທີ່ຊົງສ້າງໄວ້ (ພະຫຼຸມ) ຂ. ດ້ານເພດ*
*ຄ. ການບໍ່ສົມຄວນຫຼາຍຢ່າງ (ຈົດລາຍຊື່ຕາມພະຄຳພີກໍໄດ້)*

**2** *ກ. ມີຊາຍຄົນໜຶ່ງໄດ້ເອົາແມ່ນ້າຂອງຕົນມາເປັນເມຍ*
*ຂ. ຖ້າຫ້າມຢ່າງນັ້ນ ຈະຕ້ອງອອກໄປເສຍຈາກໂລກ ຄ. ໃຫ້ຕັດອອກເສຍຈາກພີ່ນ້ອງ*
*ງ. ຈົ່ງຍົກໂທດໃຫ້ (ອະທິບາຍຢ່າງລະອຽດກວ່ານີ້ກໍໄດ້)*
*ຈ. (ໃຫ້ຍົກຕົວຢ່າງ ແບບສົມມຸດ. ບໍ່ມີຄຳຕອບທີ່ຕາຍຕົວ)*

**3** *ກ. (ໃຫ້ເວົ້າເລື່ອງວັດອາໂຟດິດ ແລະວັດອາໂປໂລ) ຂ. (ບໍ່ມີຄຳຕອບຕາຍຕົວ)*
*ຄ. (ບໍ່ມີຄຳຕອບຕາຍຕົວ) ງ. ການຊຳຮະ ຈ. ສຳລັບພະເຈົ້າ*
*ສ. ຄົນຊອບທຳ ຊ. ຂອງພະເຢຊູຄຼິດເຈົ້າ*

**4** *ກ. "ເຮົາເຮັດສິ່ງສາລະພັດໄດ້ ບໍ່ມີໃຜຫ້າມ"*
*ຂ. ແຕ່ບໍ່ແມ່ນທຸກສິ່ງທີ່ເຮັດໄດ້ນັ້ນມີປະໂຫຍດ ແລະອີກ ແຕ່ວ່າຝ່າຍເຮົາຈະບໍ່ຍອມຢູ່ໃຕ້ອຳນາດຂອງສິ່ງໃດ*

**5** *ກ. ທ້ອງ ຂ. ພະເຈົ້າ*

**6** *ກ. ອາຫານ ຂ. ເໝາະສົມ ຄ. ເພດ ງ. ເໝາະສົມ*

**7** *ກ. ບໍ່ເໝາະສົມ ຂ. ບໍ່ເໝາະສົມ ຄ. ພະ*

**8** *ທັງສອງ*

**9** *ກ. ຂ່າວປະເສີດ ຂ. ເພາະເຫັນຊາວໂກລິນໂທບາງຄົນກາຍເປັນຄົນຊອບທຳ*

**10** *ກ. ພະເຈົ້າ ຂ. ຈະຄືນຂຶ້ນ ຄ. ອະໄວຍະວະຂອງພະຄຼິດ*
*ງ. ພະວິນຍານບໍລິສຸດ*